# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ........... ໜ້າ 01-05

II. ສານອວຍພອນ ........................................................................... ໜ້າ 06-07

III. ການເຄື່ອນໄຫວວຽກງານ ຂອງການນຳຂັ້ນສູງ ແລະ ຄຕພ.................................... ໜ້າ 08-14


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ຕຸລາ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 27/9/2022, ສະຫາຍ ຫງວຽນ ຊວນຟຸກ, ປະທານປະເທດຫວຽດນາມ ໄດ້ພົບປະກັບ ທ່ານ Charles Michel, ປະທານສະພາເອີຣົບ. ສະຫາຍ ຫງວຽນ ຊວນຟຸກ ໄດ້ກ່າວວ່າ ການຮ່ວມມືລະຫວ່າງຫວຽດນາມ ແລະ ສະຫະພາບເອີຣົບ ແມ່ນບາດກ້າວສຳຄັນ ແລະ ຫວັງວ່າ ຂໍ້ຕົກລົງການຄຸ້ມຄອງການລົງທຶນ ລະຫວ່າງຫວຽດນາມ ສະຫະພາບເອີຣົບ (EVIPA) ຈະໄດ້ຮັບການອະນຸມັດ ໃນໄວໆນີ້. ຫວຽດນາມ ພ້ອມສະໜັບສະໜູນສາຍພົວພັນລະຫວ່າງອາຊຽນ-ສະຫະພາບເອີຣົບ. ທ່ານ Michel ເຫັນດີສືບຕໍ່ການແລກປ່ຽນຄະນະຜູ້ແທນຂັ້ນສູງລະຫວ່າງສອງຝ່າຍ, ພ້ອມທີ່ຈະຊ່ວຍເຫຼືອຫວຽດນາມໃນທຸກດ້ານ, ສະເໜີໃຫ້ຫວຽດນາມເປັນແກນກາງໃນການຊ່ວຍສະຫະພາບເອີຣົບ ເພີ່ມທະວີການຮ່ວມມືອາຊຽນກັບບັນດາປະເທດໃນອາຊີ-ປາຊີຟິກ. ພ້ອມນີ້, ສອງຝ່າຍເຫັນດີຈະສືບຕໍ່ປະສານສົມທົບໃນການຈັດກອງປະຊຸມສຸດຍອດ ເນື່ອງໃນໂອກາດສ້າງຕັ້ງສາຍພົວພັນອາຊຽນ-ສະຫະພາບເອີຣົບ ຄົບຮອບ 45 ປີ.

ວັນທີ 4/10/2022, ສະຫາຍ ຫງວຽນ ຊວນຟຸກ, ປະທານປະເທດຫວຽດນາມ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Igor Krasnov, ປະທານໄອຍະການປະຊາຊົນສູງສຸດລັດເຊຍ ໃນໂອກາດຢ້ຽມຢາມ ສສ ຫວຽດນາມ ຢ່າງເປັນທາງການ ແຕ່ວັນທີ 4-5/10/2022. ສະຫາຍ ຫງວຽນ ຊວນຟຸກ ໄດ້ກ່າວວ່າ ຫວຽດນາມ ຍາມໃດກໍຖືສຳຄັນ ແລະ ຈົດຈຳການຊ່ວຍເຫຼືອຂອງອະດີດສະຫະພາບໂຊຫວຽດ ກໍຄື ລັດເຊຍ ໃນປັດຈຸບັນ, ສະເໜີໃຫ້ສອງຝ່າຍສືບຕໍ່ຊຸກຍູ້ການຮ່ວມມື ແລະ ແລກປ່ຽນຄະນະຜູ້ແທນໃນທຸກຂັ້ນ ເພື່ອຮັດແໜ້ນມິດຕະພາບ ແລະ ແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ; ຍົກສູງປະສິດທິຜົນໃນການສົມທົບກັນຕ້ານອາຊະຍາກຳ. ທ່ານ Krasnov ກ່າວວ່າ ຖະແຫຼງການຮ່ວມ ກ່ຽວກັບວິໄສທັດການພົວພັນຮ່ວມມືຍຸດທະສາດຮອບດ້ານລັດເຊຍ-ຫວຽດນາມ ຮອດປີ 2030 ເປັນບາດກ້າວການຮ່ວມມືທີ່ສຳຄັນຂອງບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຂອງສອງປະເທດ; ສອງຝ່າຍ ຍັງໄດ້ລົງນາມໃນສັນຍາວ່າດ້ວຍການຮ່ວມມືລະຫວ່າງໄອຍະການປະຊາຊົນສູງສຸດຫວຽດນາມ ແລະ ອົງການໄອຍະການປະຊາຊົນສູງສຸດລັດເຊຍ ໄລຍະປີ 2023-2025.

### 2). ພັກກອມມູນິດຈີນ

ວັນທີ 16-22 ຕຸລາ 2022, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຂອງພັກກອມມູນິດຈີນ ຄັ້ງທີ 20 ໄດ້ຈັດຂຶ້ນຢູ່ຫໍສະພາປະຊາຊົນ ທີ່ນະຄອນຫຼວງປັກກິ່ງ, ສປ ຈີນ, ມີຜູ້ແທນກອງປະຊຸມ 2,300 ສະຫາຍ ເຂົ້າຮ່ວມ. ກອງປະຊຸມ ໄດ້ຮັບຮອງເອົາກົດລະບຽບຂອງພັກສະບັບປັບປຸງ ເຊິ່ງໂດຍລວມແມ່ນ ເພີ່ມທະວີການນຳພາທົ່ວພັກ, ຊຸກຍູ້ການປົກຄອງຕົນເອງຢ່າງຄົບຖ້ວນ ແລະ ເຂັ້ມງວດ, ສືບຕໍ່ປັບປຸງກໍ່ສ້າງພັກ, ຊຸກຍູ້ການປະຕິຮູບຕົນເອງຂອງພັກ; ການພັດທະນາໃໝ່ຂອງ ສີ ຈິ້ນຜິງ ໃນແນວຄິດສັງຄົມນິຍົມຕາມສີສັນຂອງຈີນໃນຍຸກໃໝ່; ປະຕິບັດນະໂຍບາຍຈີນດຽວສອງລະບົບ ແລະ ເດັດດ່ຽວຂັດຄ້ານ ສະກັດກັ້ນບັນດາການແບ່ງແຍກດິນແດນທີ່ສະແຫວງຫາເອກະລາດໄຕຫວັນ; ຍຶດໝັ້ນຄຸນຄ່າລວມຂອງມ່ວນມະນຸດ ສັນຕິພາບ, ການພັດທະນາ, ຄວາມເປັນທຳ, ຄວາມຍຸດຕິທຳ, ປະຊາທິປະໄຕ ແລະ ເສລີພາບ. ນອກຈາກນີ້, ກອງປະຊຸມໄດ້ເລືອກເອົາກົມການເມືອງສູນກາງພັກ ຈຳນວນ 24 ສະຫາຍ, ຄະນະກຳມະການງານສູນກາງພັກ ຈຳນວນ 205 ສະຫາຍ, ກຳມະການສຳຮອງສູນກາງພັກ ຈຳນວນ 171 ສະຫາຍ ແລະ ກຳມະການກວດກາວິໄນສູນກາງພັກ ຈຳນວນ 133 ສະຫາຍ.

ກອງປະຊຸມ ຄົບຄະນະຄັ້ງປະຖົມມະເລີກຂອງຄະນະກຳມະການສູນກາງພັກກອມມູນິດຈີນ ຊຸດທີ 20 ໄດ້ເລືອກສະຫາຍ ສີ ຈິ້ນຜິງ ເປັນເລຂາທິການໃຫຍ່ ແລະ ປະທານຄະນະກຳມະການທະຫານສູນກາງພັກກອມມູນິດຈີນ ສະໄໝທີ 3; ເລືອກເອົາຄະນະປະຈຳກົມການເມືອງສູນກາງພັກ 7 ສະຫາຍ ຄື: ສະຫາຍ ສີ ຈິ້ນຜິງ, ສະຫາຍ ຫຼີ ສຽງ,

ສະຫາຍ ຈ້າວ ເລີ້ຈີ, ສະຫາຍ ຫວັງ ຫູໜິງ, ສະຫາຍ ໄຊ ສີ, ສະຫາຍ ຕິ້ງ ເສຊຽງ ແລະ ສະຫາຍ ຫຼີ ສີ. ໃນນັ້ນ, ສະມາຊິກເກົ່າ 3 ສະຫາຍ, ເລືອກໃໝ່ 4 ສະຫາຍ.

**3). ພັກກອມມູນິດກູບາ**

ວັນທີ 02-04/10/2022, ສະຫາຍ Manuel Marrero Cruz, ນາຍົກລັດຖະມົນຕີ ແຫ່ງ ສ.ກູບາ ເດີນທາງຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ, ໄດ້ພົບປະກັບ ສະຫາຍ ພັນຄຳ ວິພາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະຫາຍ ໄຊສົມພອນ ພົມວິຫານ, ປະທານສະພາແຫ່ງຊາດ ແລະ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ. ສອງຝ່າຍ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈ 04 ສະບັບ ຄື: ບົດບັນທຶກຄວາມເຂົ້າໃຈລະຫວ່າງກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ແລະ ກະຊວງສຶກສາຊັ້ນສູງແຫ່ງ ສ.ກູບາ ໃນໄລຍະປີ 2022-2027; ບົດບັນທຶກຄວາມເຂົ້າໃຈລະຫວ່າງ ສອງກະຊວງກະສິກຳ ແລະ ປ່າໄມ້; ແຜນການຮ່ວມມືດ້ານການແພດ ແລະ ການຮ່ວມມືລະຫວ່າງມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລລາຮາວານ.

ວັນທີ 4-8/10/2022, ສະຫາຍ Ricardo Cabrisas Ruiz, ຮອງນາຍົກລັດຖະມົນຕີ ສ.ກູບາ ໄດ້ເດີນທາງຢ້ຽມຢາມລັດເຊຍ ຢ່າງເປັນທາງການ ແລະ ໄດ້ພົບປະກັບ ທ່ານ Dmitry Chernishenko, ຮອງນາຍົກລັດຖະມົນຕີລັດເຊຍ, ຊຶ່ງໄດ້ປຶກສາຫາລືໃນການເພີ່ມທະວີການຮ່ວມມືສອງຝ່າຍໃຫ້ຫຼາຍຂຶ້ນ ໂດຍສະເພາະດ້ານເສດຖະກິດ-ການຄ້າ ແລະ ວິທະຍາສາດ-ເຕັກໂນໂລຊີ; ສອງຝ່າຍ ຍັງໄດ້ຕົກລົງສ້າງແຜນການຮ່ວມມືຂອງສອງປະເທດໃນແຕ່ລະໄລຍະ ແລະ ແລກປ່ຽນສະພາບການເມືອງທີ່ມີຄວາມສັບສົນ, ຊຶ່ງກູບາ ແລະ ລັດເຊຍ ຕ່າງກໍ່ຖືກ ອາເມຣິກາ ແລະ ພັນທະມິດຂວ້ຳບາດພຽງຝ່າຍດຽວ.

**4). ການເລືອກຕັ້ງລັດຖະສະພາ ແລະ ວຸດທິສະພາອີຕາລີ**

ພາຍຫຼັງອີຕາລີປະເຊີນກັບບັນຫາພາຍໃນ ແລະ ຍຸບສະພາໃນຕົ້ນເດືອນກັນຍາ 2022 ຜ່ານມາ, ວັນທີ 25/9/2022, ອີຕາລີ ໄດ້ຈັດການເລືອກຕັ້ງລັດຖະສະພາ ກ່ອນກຳນົດຂຶ້ນ ເພື່ອຄັດເລືອກເອົາສະມາຊິກສະພາ ຈຳນວນ 600 ບ່ອນນັ່ງ (ສະພາຕ່ຳ 400 ບ່ອນນັ່ງ ແລະ ສະພາສູງ 200 ບ່ອນນັ່ງ), ໂດຍມີປະຊາຊົນໄປໃຊ້ສິດເລືອກຕັ້ງ 64,67% ຫຼຸດລົງ 8,33% ຖ້າທຽບໃສ່ການເລືອກຕັ້ງປີ 2018. ຜົນການເລືອກຕັ້ງແມ່ນ ພັກອ້າຍນ້ອງອີຕາລີ (Brother of Italy), ພັກຂວາຈັດ ມີນະໂຍບາຍຄັດຄ້ານ EU ນຳໂດຍ ທ່ານ ນາງ Giorgia Meloni, ອາຍຸ 45 ປີ ຍາດໄດ້ 119 ບ່ອນນັ່ງໃນສະພາຕ່ຳ ເພີ່ມຂຶ້ນ 87 ບ່ອນນັ່ງ ແລະ 65 ບ່ອນນັ່ງໃນສະພາສູງ ເພີ່ມຂຶ້ນ 47 ບ່ອນນັ່ງ, ຊຶ່ງເຮັດໃຫ້ ທ່ານ ນາງ Meloni ເປັນນາຍົກລັດຖະມົນຕີຍິງຄົນທຳອິດຂອງອີຕາລີ; ພັກປະຊາທິປະໄຕ (Democratic Party) ນຳໂດຍ ທ່ານ Mario Draghi, ນາຍົກລັດຖະມົນຕີຄົນປັດຈຸບັນ ໄດ້ 69 ບ່ອນນັ່ງໃນລັດຖະສະພາ ຫຼຸດລົງ 43 ບ່ອນນັ່ງ ແລະ 40 ບ່ອນນັ່ງໃນວຸດທິສະພາ ຫຼຸດລົງ 13 ບ່ອນນັ່ງ; ພັກສັນນິບາດເໜືອ (Northern League) ໄດ້ 66 ບ່ອນນັ່ງໃນລັດຖະສະພາ ຫຼຸດລົງ 59 ບ່ອນນັ່ງ ແລະ 30 ບ່ອນນັ່ງໃນວຸດທິສະພາ ຫຼຸດລົງ 28 ບ່ອນນັ່ງ; ພັກຂະບວນການ 5 ດາວ (Five Star Movement) ໄດ້ 52 ບ່ອນນັ່ງໃນລັດຖະສະພາ ຫຼຸດລົງ 175 ບ່ອນນັ່ງ ແລະ 28 ບ່ອນນັ່ງໃນວຸດທິສະພາ ຫຼຸດລົງ 84 ບ່ອນນັ່ງ; ພັກອີຕາລີກ້າວໄປ (Forza Italia) ໄດ້ 45 ບ່ອນນັ່ງໃນລັດຖະສະພາ ຫຼຸດລົງ 59 ບ່ອນນັ່ງ ແລະ 18 ບ່ອນນັ່ງໃນວຸດທິສະພາ ຫຼຸດລົງ 39 ບ່ອນນັ່ງ ແລະ ພັກການເມືອງອື່ນໆແມ່ນໄດ້ບໍ່ເກີນ 20 ບ່ອນນັ່ງທັງສອງສະພາ.

**5). ການເລືອກຕັ້ງບຣາຊິນ**

ວັນທີ 3/10/2022, ບຣາຊິນ ໄດ້ຈັດການເລືອກຕັ້ງປະທານາທິບໍດີ ຊຶ່ງມີຜູ້ສະໝັກຕົວແທນຈາກ 11 ພັກການເມືອງເຂົ້າຮ່ວມ. ຜົນການເລືອກຕັ້ງແມ່ນ ທ່ານ Luiz Inacio Lula da Silva, ອະດີດປະທານາທິບໍດີບຣາຊິນແຕ່ປີ 2003-2010, ພັກແຮງງານບຣາຊິນ, ພັກຝ່າຍຊ້າຍ ໄດ້ສຽງສະໜັບສະໜູນ 48,4%; ທ່ານ Jair Bolsonaro,

ພັກເສລີນິຍົມ, ພັກຝ່າຍຂວາ, ປະທານປະເທດຄົນປັດຈຸບັນ ໄດ້ 43,3% ແລະ ຜູ້ສະໝັກອີກ 9 ທ່ານ ໄດ້ຄະແນນບໍ່ເຖິງ 2%. ພ້ອມດຽວກັນ, ຍັງໄດ້ເລືອກເອົາສະມາຊິກສະພາປະຊາຊົນ 513 ທ່ານ, ສະມາຊິກສະພາສູງ 81 ທ່ານ. ຕາມກົດໝາຍການເລືອກຕັ້ງບຣາຊິນ ຫາກຜູ້ສະໝັກໄດ້ຄະແນນບໍ່ເຖິງ 50% ຜູ້ສະໝັກທີ່ໄດ້ຄະແນນສູງສຸດ 2 ຄົນ ຕ້ອງໄດ້ເລືອກຕັ້ງຮອບ 2 ເພື່ອເລືອກເອົາປະທານາທິບໍດີ, ເຊິ່ງການເລືອກຕັ້ງຮອບ 2 ໄດ້ຈັດຂຶ້ນໃນວັນທີ 30/10/2022 ໂດຍແມ່ນທ່ານ Lula, ອະດີດປະທານາທິບໍດີ ຊະນະດ້ວຍຄະແນນ 50,83% ແລະ ສ່ວນທ່ານ Bolsonaro ໄດ້ຄະແນນ 49,17%.

**6). ສະພາບການເມືອງອັງກິດ**

ຫຼັງຈາກ ທ່ານ ນາງ Elizabeth Truss, ນາຍົກລັດຖະມົນຕີ ໄດ້ປະກາດລາອອກຈາກຕຳແໜ່ງຫົວໜ້າພັກອະນຸລັກນິຍົມ ແລະ ນາຍົກລັດຖະມົນຕີອັງກິດ ໃນວັນທີ 20/10/2022 ດຳລົງຕຳແໜ່ງໄດ້ພຽງ 45 ມື້ ຍ້ອນຖືກກົດດັນຈາກພາຍໃນພັກ ແລະ ບັນດາສະມາຊິກສະພາຝ່າຍກົງກັນຂ້າມຢ່າງຮຸນແຮງ ທີ່ບໍ່ສາມາດບໍລິຫານປະເທດ ໂດຍສະເພາະແມ່ນການແກ້ໄຂບັນຫາເສດຖະກິດ ແລະ ການເງິນ ທີ່ບໍ່ໄດ້ຮັບໝາກຜົນ. ໃນວັນທີ 25/10/2022 ທ່ານ Rishi Sunak, ອະດີດລັດຖະມົນຕີກະຊວງການເງິນ, ອາຍຸ 42 ປີ, ເຊື້ອຊາດອິນເດຍ ໄດ້ຂຶ້ນມາເປັນຫົວໜ້າພັກອະນຸລັກນິຍົມຂອງ ສ. ອັງກິດ ແລະ ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ ຜູ້ທີ 57. ພາຍຫຼັງເຂົ້າພົບ ແລະ ຮັບຮອງເອົາ ໂດຍເຈົ້າຊີວິດ Charles III ທີ່ພະຣາຊະວັງ ບັກກິງແຮມ ຢ່າງເປັນທາງການ, ທ່ານ Sunak ໄດ້ຖະແຫຼງການວ່າ ອັງກິດ ພວມປະເຊີນກັບວິກິດການເສດຖະກິດທີ່ໜັກໜ່ວງ ແລະ ການສ້າງຄວາມເຊື່ອໝັ້ນ ຈະເປັນຫົວໃຈຫຼັກຂອງການບໍລິຫານລັດຖະບານຊຸດນີ້. ລັດຖະບານ ຈະສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນ ແລະ ຕໍ່ພັກອະນຸລັກນິຍົມ, ຈະເຕົ້າໂຮມຄວາມສາມັກຄີພາຍໃນປະເທດ. ໃນຄະນະລັດຖະບານປະກອບມີ: ທ່ານ Dominic Rabb, ສືບຕໍ່ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງຍຸຕິທຳ; ທ່ານ Jeremy Hunt, ສືບຕໍ່ເປັນລັດຖະມົນຕີກະຊວງການເງິນ; ທ່ານ James Cleverly, ສືບຕໍ່ເປັນລັດຖະມົນຕີກະຊວງການຕ່າງປະເທດ ແລະ ທ່ານ Ben Wallace, ສືບຕໍ່ເປັນລັກຖະມົນຕີກະຊວງປ້ອງກັນປະເທດ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ໃນເດືອນຕຸລາ 2022 ເຫດການພົ້ນເດັ່ນຂອງຂົງເຂດນີ້ ແມ່ນການຢ້ຽມຢາມ ຍີ່ປຸ່ນ ແລະ ສ. ເກົາຫຼີ ຂອງທ່ານຮອງປະທານາທິບໍດີອາເມລິກາ; ບັນຫາແຫຼມເກົາຫຼີ ແລະ ການເມືອງພາຍໃນຂອງບາງປະເທດ ດັ່ງນີ້:

- ວັນທີ 26-29/9/2022, ທ່ານ ນາງ Kamala Harris, ຮອງປະທານາທິບໍດີອາເມລິກາ ໄດ້ເດີນທາງຢ້ຽມຢາມ ຍີ່ປຸ່ນ ແລະ ສ.ເກົາຫຼີ ຕາມລຳດັບ, ເປັນການຢ້ຽມຢາມຄັ້ງທຳອິດນັບຕັ້ງແຕ່ເຂົ້າຮັບຕຳແໜ່ງຮອງປະທານາທິບໍດີອາເມລິກາ. ການຢ້ຽມຢາມຍີ່ປຸ່ນ, ທ່ານ ນາງ Harris ໄດ້ພົບກັບ ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ, ເຂົ້າຮ່ວມພິທີໄຫວ້ອາໄລ ອະດີດນາຍົກລັດຖະມົນຕີ Shinzo Abe; ສອງຝ່າຍເຫັນດີຍົກລະດັບການປ້ອງກັນປະເທດລະຫວ່າງສອງປະເທດ, ສືບຕໍ່ສະໜັບສະໜູນນະໂຍບາຍ ອິນໂດ-ປາຊີຟິກ ເພື່ອຈຳກັດການຂະຫຍາຍຕົວຂອງ ສປ ຈີນໃນພາກພື້ນ. ພ້ອມດຽວກັນ, ຍັງໄດ້ພົບປະກັບຜູ້ນຳກຸ່ມ Quad (ອົດສະຕຣາລີ, ຍີ່ປຸ່ນ ແລະ ອິນເດຍ) ແລະ ແລກປ່ຽນກັນໃນຫຼາຍບັນຫາເປັນຕົ້ນບັນຫາຄວາມໝັ້ນຄົງໃນພາກພື້ນ, ວິກິດການທາງດ້ານສະພາບແວດລ້ອມ ແລະ ອື່ນໆ. ສ່ວນການຢ້ຽມຢາມ ສ.ເກົາຫຼີ, ທ່ານ ນາງ Harris ໄດ້ພົບປະກັບ ທ່ານ Yoon Suk-Yeol, ປະທານາທິບໍດີ ສ.ເກົາຫຼີ ເພື່ອເນັ້ນຢ້ຳສາຍພົວພັນລະຫວ່າງສອງປະເທດ, ໄດ້ປຶກສາຫາລືກັນໃນບັນຫາແຫຼມເກົາຫຼີ, ບັນຫາໄຕ້ຫວັນ, ການແລກປ່ຽນດ້ານຄວາມໝັ້ນຄົງ, ເສດຖະກິດ ແລະ ອື່ນໆ.

- ບັນຫາແຫຼມເກົາຫຼີ ໃນເດືອນຕຸລາ ມີຄວາມເຄັ່ງຕຶງກວ່າເກົ່າ ຍ້ອນການຊ້ອມຮົບທາງທະເລ ລະຫວ່າງ ສ. ເກົາຫຼີ ແລະ ພັນທະມິດ ລະຫວ່າງວັນທີ 26-29 ກັນຍາ 2022 ໂດຍມີເຮືອຮົບ ຫຼາຍກວ່າ 20 ລຳ ລວມທັງກຳປັ່ນ

ບັນທຸກເຮືອບິນ USS Ronald Reagan ແລະ ເຮືອດຳນ້ຳ USS Annapolis ຂອງອາເມຣິກາທີ່ໃຊ້ພະລັງງານນິວເຄຣຍ. ຂະນະທີ່ ສປປ ເກົາຫຼີ ກໍໄດ້ທົດລອງຍິງລູກສອນໄຟ 8 ຄັ້ງ ໃນໄລຍະດຽວກັນທີ່ ອາເມລິກາ ແລະ ສ. ເກົາຫຼີ ຮ່ວມກັນຊ້ອມຮົບ ດັ່ງກ່າວ. ອາເມລິກາ ແລະ ສ. ເກົາຫຼີ ປະນາມຢ່າງຮຸນແຮງຕໍ່ການທົດລອງດັ່ງກ່າວ ແລະ ໃນວັນທີ 23 ຕຸລາ 2022, ກອງທັບ ສ. ເກົາຫຼີ ໄດ້ຍິງປືນໃຫຍ່ເຕືອນເຮືອລຳໜຶ່ງຂອງ ສປປ ເກົາຫຼີ ທີ່ຂ້າມເສັ້ນແບ່ງເຂດແດນທາງທະເລ ລະຫວ່າງ ສອງເກົາຫຼີ ໃນທະເລເຫຼືອງປະມານ 20 ລູກ ແລະ ກອງທັບ ສປປ ເກົາຫຼີ ກໍໄດ້ຍິງປືນໃຫຍ່ 10 ລູກລົງທະເລຕາເວັນຕົກ ເພື່ອເຕືອນເຮືອເຮືອຂອງ ສ ເກົາຫຼີທີ່ຂ້າມເສັ້ນແດນ.

- ການເມືອງໄທ ວັນທີ 30 ກັນຍາ 2022 ສານລັດຖະທຳມະນູນ ໄດ້ພິຈາລະນາຕໍ່ວາລະການດຳລົງຕຳແໜ່ງຂອງນາຍົກລັດຖະມົນຕີ ປຣະຢຸດ ຈັນໂອຊາ ດ້ວຍການລົງມະຕິ 6 ຕໍ່ 3 ສຽງ ເຫັນດີໃຫ້ ທ່ານ ປະຢຸດ ສາມາດປະຕິບັດໜ້າທີ່ນາຍົກລັດຖະມົນຕີຕໍ່ໄປ ໂດຍນັບແຕ່ວັນທີ 6/4/2017 ເຖິງວັນທີ 5/4/2025 ຈຶ່ງຈະຄົບວາລະ 8 ປີ ຕາມລັດຖະທຳມະນູນ ສະບັບປີ 2017 ເຖິງແມ່ນວ່າ ບັນດາພັກຮ່ວມຝ່າຍຄ້ານ ຈະເຫັນວ່າ ທ່ານ ປຣະຢຸດ ຕ້ອງໝົດວາລະດຳລົງຕຳແໜ່ງດັ່ງກ່າວ ແຕ່ວັນທີ 24 ກັນຍາ 2022 ກໍຕາມ.

- ການເມືອງມາເລເຊຍ: ວັນທີ 10/10/2022, ທ່ານ Ismail Sabri Yaakob, ນາຍົກລັດຖະມົນຕີມາເລເຊຍ, ປະທານພັກ the United Malays National Organisation (UMNO) ໄດ້ປະກາດຍຸບສະພາ ເພື່ອກະກຽມການເລືອກຕັ້ງທົ່ວໄປ ໃນອີກ 60 ວັນ ຕໍ່ໜ້າ ຕາມລັດຖະທຳມະນູນມາເລເຊຍ (ວັນທີ 9/10/2022). ທ່ານ Ismail Sabri Yaakob ໄດ້ກ່າວວ່ານັບແຕ່ພັກ UMNO ຂອງຕົນພ່າຍແພ້ໃນການເລືອກຕັ້ງໃນປີ 2018 ໄດ້ເຮັດໃຫ້ເກີດຄວາມວຸ້ນວາຍ, ການເມືອງບໍ່ມີສະຖຽນລະພາບ, ມີການສັບປ່ຽນນາຍົກລັດຖະມົນຕີເຖິງສອງຄົນ (ທ່ານ Muhyiddid Yassin, ຈາກພັກ Malaysian United Indigenous ແລະ ທ່ານ Ismail Sabri Yaakob, ນາຍົກຄົນປັດຈຸບັນ, ຈາກພັກ UMNO ) ພາຍຫຼັງ ທ່ານ Mahathir Mohamad ໄດ້ລາອອກຈາກຕຳແໜ່ງນາຍົກລັດຖະມົນຕີ ໃນປີ 2020 ຫຼັງຈາກດຳລົງຕຳແໜ່ງໄດ້ພຽງສອງປີ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ສະພາບການໃນອູແກຣນ ໃນເດືອນຕຸລາ 2022, ພາຍຫຼັງ 4 ເຂດແຄ້ນໃນພາກຕາເວັນອອກຂອງອູແກຣນ (Donetsk, Luhansk , Zaporizhia ແລະ Kherson) ສຳເລັດການລົງປະຊາມະຕິເປັນສ່ວນໜຶ່ງຂອງລັດເຊຍ ແຕ່ວັນທີ 23-27/9/2022 ແລະ ໄດ້ຮັບການຮັບຮອງເປັນດິນແດນລັດເຊຍຢ່າງເປັນທາງການຈາກປະທານາທິບໍດີ ປູຕິນແຫ່ງລັດເຊຍ, ໄດ້ເຮັດໃຫ້ການປະທະກັນລະຫວ່າງ ອູແກຣນ ແລະ ລັດເຊຍ ຮຸນແຮງຂຶ້ນກວ່າເກົ່າ ໂດຍສະເພາະແມ່ນ ອູແກຣນ ໄດ້ລະເບີດຂົວຂະໜາດໃຫຍ່ (Kerch Bridge) ຍາວ 18 ກິໂລແມັດ, ທີ່ເຊື່ອມຕໍ່ແຫຼມ Crimea ກັບລັດເຊຍໃນວັນທີ 8/10/2022 ຜ່ານມາ, ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ປະຊຸມສະພາຄວາມໝັ້ນຄົງຂອງລັດເຊຍດ່ວນ ໃນວັນທີ 10/10/2022 ກ່າວປະນາມອູແກຣນ ເປັນການກໍ່ການຮ້າຍໃນດິນແດນລັດເຊຍ ແລະ ໄດ້ຕອບໂຕ້ຄືນໂດຍສັ່ງໃຫ້ກອງທັບລັດເຊຍ ໂຈມຕີບັນດາກອງບັນຊາການທະຫານ, ແຫຼ່ງຜະລິດພະລັງງານ ແລະ ເຄືອຂ່າຍການສື່ສານຂອງ ອູແກຣນໃນ 12 ຕົວເມືອງ ເຊັ່ນ: ນະຄອນຫຼວງ Kyiv, ເມືອງ Dnipro, Kremenchuk, Lviv, Chernobyl, Zhytomyr, Zaporizhia, Ternopil, Summy, Kirohvohra, Vinnytsia ແລະ Kharkiv ດ້ວຍໂດຣນ ແລະ ລູກສອນໄຟໄລຍະໄກ (Long-range missiles) ຈາກທຸກທິດທາງ (ທາງບົກ, ນ້ຳ ແລະ ອາກາດ) ເຮັດໃຫ້ອູແກຣນ ໄດ້ຮັບຄວາມເສຍຫາຍເປັນວົງກວ້າງ. ວັນທີ 19/10/2022 ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ປະກາດໃຊ້ກົດໄອຍະການເສິກ ຢູ່ໃນ 4 ເຂດແຄວ້ນ (ໂດເນັດ, ລູຮັນ, ເຄີຊັນ ແລະ ຊາໂປໂຣເຊຍ) ໂດຍເລີ່ມປະຕິບັດມາແຕ່ວັນທີ 20/10/2022.

ກອງປະຊຸມສະມັດຊາໃຫຍ່ ສປຊ (UNGA) ໄດ້ລົງຄະແນນສຽງປະນາມລັດເຊຍ ໃນການລວມເອົາ 4 ເຂດແຄວ້ນຂອງ ອູແກຣນ ໂດຍມີ 143 ປະເທດ ເຫັນດີຕໍ່ມະຕິດັ່ງກ່າວ, 35 ປະເທດ (ລວມທັງ ຈີນ ແລະ ອິນເດຍ) ງົດອອກສຽງ ແລະ 4 ປະເທດທີ່ຄັດຄ້ານ (ເບລາຣຸດຊີ, ສປປ ເກົາຫຼີ, ຊີຣີ ແລະ ນິກາຣາກົວ). ສ່ວນທ່ານ Volodymyr

Zelensky, ປະທານາທິບໍດີອູແກຣນ ໄດ້ຮຽກຮ້ອງ NATO ເພື່ອຮັບເອົາອູແກຣນ ເຂົ້າເປັນສະມາຊິກແບບເລັ່ງດ່ວນ ເພື່ອຈະໄດ້ສິດເຕັມທີ່ໃນການໄດ້ຮັບຄວາມຄຸ້ມຄອງ ແລະ ຊ່ວຍເຫຼືອຈາກ NATO, ແຕ່ບັນດາປະເທດສະມາຊິກ NATO ຍັງຄົງຢືນຢັນວ່າຕ້ອງໄດ້ຮັບການພິຈາລະນາລະອຽດຮອບຄອບ ແລະ ໃຊ້ເວລາພໍສົມຄວນກ່ອນ. ທ່ານ Zelensky ຍັງໄດ້ລົງນາມໃນດຳລັດບໍ່ອະນຸຍາດໃຫ້ເຈລະຈາທຸກຂັ້ນກັບລັດເຊຍ.

ອາເມຣິກາ ແລະ ພັນທະມິດ ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອ ອູແກຣນ ໂດຍ ອາເມລິກາ ໄດ້ຊ່ວຍເຫຼືອດ້ານອາວຸດ ສົງຄາມຫຼ້າສຸດມີມູນຄ່າ 625 ລ້ານໂດລາສະຫະລັດ ເຊັ່ນ: ລະບົບລູກສອນໄຟ HIMARS 18 ຊຸດ, ລົດຫຸ້ມເກາະ 150 ຄັນ ແລະ ອື່ນໆ; ຈະສືບຕໍ່ສົ່ງລະບົບປ້ອງກັນທາງອາກາດ ແລະ ລູກສອນໄຟ ໃຫ້ ອູແກຣນ ຕື່ມອີກ. EU ແລະ ກຸ່ມ ປະເທດ G7 ກໍຈະເພີ່ມການຊ່ວຍເຫຼືອດ້ານການທະຫານໃຫ້ ອູແກຣນ. ສ່ວນເຢຍລະມັນ ໄດ້ສົ່ງລະບົບປ້ອງກັນໄພທາງ ອາກາດ ລຸ້ນ IRIS-TSLM ຊຸດທຳອິດໃຫ້ ອູແກຣນ ຈາກທັງໝົດ 4 ຊຸດ, ຊຶ່ງສາມາດໂຈມຕີເຄື່ອງບິນເຮລິຄອບເຕີ ແລະ ຂີປະນາວຸດໄດ້. ອົດສະຕຣາລີ ກໍໄດ້ປະກາດມາດຕະການລົງໂທດທາງການເງິນ ແລະ ການເດີນທາງຂອງຄົນ ລັດເຊຍ ເປັນຕົ້ນລັດຖະມົນຕີ, ເຈົ້າໜ້າທີ່ລະດັບສູງ ແລະ ຜູ້ສະໜັບສະໜູນການແບ່ງແຍກດິນແດນ.

**3). ສະພາບການ ໃນຕາເວັນອອກກາງ**

ວັນທີ 11/10/2022, ອິດສະຣາແອນ ແລະ ລີບັງ ໄດ້ບັນລຸຂໍ້ຕົກລົງຄັ້ງປະຫວັດສາດໃນການກຳນົດເຂດແດນ ທາງທະເລ ທີ່ຂັດແຍ່ງກັນມາຍາວນານ. ທ່ານ Yair Lapid, ນາຍົກລັດຖະມົນຕີອິດສະຣາແອນ ໄດ້ກ່າວວ່າຜົນສຳເລັດ ໃນຄັ້ງປະຫວັດສາດນີ້ໄດ້ສ້າງຄວາມໝັ້ນຄົງ ແລະ ສະຖຽນລະພາບທາງດ້ານຊາຍແດນໃຫ້ກັບສອງປະເທດ. ສ່ວນ ທ່ານ Michel Aoun, ປະທານາທິບໍດີລີບັງ ກ່າວວ່າ ເງື່ອນໄຂຕ່າງໆຂອງຂໍ້ຕົກລົງສະບັບຫຼ້າສຸດສາມາດຕົກລົງກັນໄດ້ ຢ່າງດີ ເຮັດໃຫ້ລີບັງມີສິດໃນຊັບພະຍາກອນທຳມະຊາດຂອງຕົນ ແລະ ຫວັງວ່າຂໍ້ຕົກລົງສະບັບນີ້ຈະໄດ້ຮັບການປະກາດ ຢ່າງເປັນທາງການໂດຍໄວທີ່ສຸດ. ຂໍ້ຕົກລົງດັ່ງກ່າວ ຈະເຮັດໃຫ້ອິດສະລາແອນມີຄວາມໝັ້ນຄົງດ້ານເສດຖະກິດ ແລະ ຊາຍແດນທາງພາກເໜືອຫຼາຍຂຶ້ນ, ເຮັດໃຫ້ເສດຖະກິດລີບັງຄ່ອງຕົວຂຶ້ນພາຍຫຼັງພົບກັບວິກິດການທາງການເງິນຢ່າງໜັກ ໜ່ວງ, ສິ່ງສຳຄັນຈະສາມາດຈັດຫາແຫຼ່ງແກ໋ສທຳມະຊາດທີ່ມີຄຸນະພາບໃຫ້ແກ່ EU ໃນທ່າມກາງບັນຫາການຂາດ ແຄນພະລັງງານທີ່ເກີດຂຶ້ນຈາກວິກິດການໃນ ອູແກຣນ. ແນວໃດກໍຕາມ ອິດສະລາແອນ ແລະ ລີບັງ ຍັງບໍ່ໄດ້ສ້າງຕັ້ງ ສາຍພົວພັນການທູດນຳກັນ ຍ້ອນຄວາມຂັດແຍ່ງດິນແດນມາເປັນເວລາດົນນານຕັ້ງແຕ່ອິດສະລາແອນຍຶດຄອງ ດິນແດນທາງພາກໃຕ້ຂອງລີບັງ ແຕ່ປີ 1982-2000 ແລະ ເກີດສົງຄາມລະຫວ່າງ ອິດສະລາແອນ ແລະ ກຸ່ມຕິດອາວຸດ ຮິດບອນເລາະໃນລີບັງໃນປີ 2006 ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 1,500 ຄົນ.

**ແຫຼ່ງຂ່າວອ້າງອີງ** :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, CRI, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການ ຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ໂທລະເລກອວຍພອນ

1. **ຄະນະບໍລິຫານສູນກາງພັກ ປປ ລາວ ສົ່ງສານອວຍພອນເຖິງ ຄະນະກຳມະການສູນກາງພັກກອມມູນິດຈີນ ໃນໂອກາດໄຂກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ**

ເນື່ອງໃນໂອກາດ ພັກກອມມູນິດຈີນ ດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ທີ່ ນະຄອນຫຼວງປັກກິ່ງ ໃນວັນທີ 16 ຕຸລາ 2022, ໃນນາມຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ, ສະມາຊິກພັກ ແລະ ປະຊາຊົນລາວບັນດາເຜົ່າ, ພວກຂ້າພະເຈົ້າ ຂໍສົ່ງຄວາມຊົມເຊີຍອັນອົບອຸ່ນ, ພອນໄຊອັນປະເສີດ ແລະ ອາລົມຈິດ ແຫ່ງ ຄວາມສາມັກຄີຮັກແພງອັນສະໜິດສະໜົມ ຖານສະຫາຍອ້າຍນ້ອງຮ່ວມອຸດົມການດຽວກັນ ມາຍັງຄະນະກຳມະການສູນກາງພັກກອມມູນິດຈີນ, ບັນດາຜູ້ແທນກອງປະຊຸມໃຫຍ່ ແລະ ຜ່ານກອງປະຊຸມໃຫຍ່ ໄປຍັງສະມາຊິກພັກ ແລະ ປະຊາຊົນຈີນອ້າຍນ້ອງ ທຸກຖ້ວນໜ້າ.

ພວກຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າ, ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ແລະປະດິດສ້າງ ໃໝ່ ຂອງພັກກອມມູນິດຈີນ ໃນຕະຫຼອດກວ່າ 1 ສັດຕະວັດທີ່ຜ່ານມາ, ປະຊາຊົນຈີນອ້າຍນ້ອງ ໄດ້ຜ່ານຜ່າການທົດສອບນາໆປະການ ແລະ ສາມາດຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ, ເປັນປະຫວັດການ ແລະ ມະຫັດສະຈັນໃນການສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ສຳເລັດການສ້າງສັງຄົມນິຍົມທີ່ອິ່ມໜຳສຳລານຮອບດ້ານໂດຍພື້ນຖານ, ສຳເລັດການແກ້ໄຂຄວາມທຸກຍາກຂອງປະຊາຊົນ. ພວກຂ້າພະເຈົ້າ ເຊື່ອໝັ້ນວ່າ ພາຍໃຕ້ແສງສະຫວ່າງຂອງມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງ ພັກກອມມູນິດຈີນ ທີ່ມີ ສະຫາຍ ສີ ຈິ້ນຜິງ ເປັນແກນກາງກໍຄື ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ຈະສາມາດຍາດໄດ້ໄຊຊະນະຮອບດ້ານອັນໃໝ່, ຍິ່ງໃຫຍ່ກວ່າເກົ່າ.

ຂໍອວຍພອນໃຫ້ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ທີ່ມີກຽດສະຫງ່າຈົ່ງປະສົບຜົນສຳເລັດຢ່າງຈົບງາມ. ອວຍພອນໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊະຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ຈົ່ງໝັ້ນຄົງຂະໜົງແກ່ນ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

2. **ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງໂທລະເລກຊົມເຊີຍເຖິງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ**

ເນື່ອງໃນໂອກາດທີ່ ສະຫາຍ ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນ ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ ອີກວາລະໜຶ່ງ, ໃນນາມ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ສົ່ງຄວາມຊົມເຊີຍຢ່າງຈິງໃຈ, ອາ ລົມຈິດແຫ່ງຄວາມສາມັກຄີຮັກແພງຖານສະຫາຍອ້າຍນ້ອງ ແລະ ພອນໄຊອັນປະເສີດມາຍັງ ສະຫາຍ ແລະ ຜ່ານສະຫາຍ ໄປຍັງ ຄະນະກຳມະການສູນກາງພັກກອມມູນິດຈີນ ສະໄໝທີ XX. ການທີ່ສະຫາຍ ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນ ເລຂາທິການໃຫຍ່ອີກວາລະໜຶ່ງ ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງ ພັກກອມມູນິດຈີນ ເປັນການສະແດງໃຫ້ເຫັນຢ່າງຊັດເຈນ ເຖິງຄວາມໄວ້ເນື້ອເຊື່ອໃຈຢ່າງເຕັມປ່ຽມ ຂອງຜູ້ແທນກອງປະຊຸມໃຫຍ່ ກໍຄື ທົ່ວພັກ, ທົ່ວລັດ ແລະ ປະຊາຊົນຈີນ ທີ່ມີຕໍ່ສະຫາຍ ໃນຖານະເປັນຜູ້ນຳທີ່ປີຊາສາມາດ, ເປັນແກນກາງຂອງພັກ, ຊຶ່ງປ່ຽມລົ້ນໄປດ້ວຍປະສົບການ ແລະ ມີຜົນງານອັນໂດດເດັ່ນ ໃນການຊີ້ນຳນຳພາ ພາລະກິດສ້າງສາສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ໃນຍຸກສະໄໝໃໝ່. ຂ້າພະເຈົ້າ ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນເຂັ້ມແຂງ ຂອງ ສູນກາງພັກກອມມູ

ນິດຈີນ ທີ່ມີ ສະຫາຍ ສີບຕໍ່ເປັນແກນກາງນັ້ນ, ປະຊາຊົນຈີນອ້າຍນ້ອງ ຈະສາມາດຍາດໄດ້ຜົນສຳເລັດຮອບດ້ານອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກ ກໍຄື ການສ້າງສັງຄົມນິຍົມທີ່ເຂັ້ມແຂງທັນສະໄໝ ຮອບດ້ານ, ບັນລຸເປົ້າໝາຍ 100 ປີເທດການທີສອງ ແລະ ການຟື້ນຟູຄວາມຮຸ່ງເຮືອງສີວິໄລຂອງຊາດຈີນ ໃຫ້ປະກົດຜົນເປັນຈິງຢ່າງມີໄຊ.

**3. ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງໂທລະເລກອວຍພອນເຖິງ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ**

ໃນວັນທີ 10 ຕຸລາ 2022, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກອວຍພອນ ເຖິງ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ສປປ ເກົາຫຼີ, ຜູ້ບັນຊາການສູງສຸດກຳລັງປະກອບອາວຸດ ສປປ ເກົາຫຼີ ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 77 ປີ (10/10/1945-10/ 10/2022), ຊຶ່ງ ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມຂໍ່ານັບຊົມເຊີຍອັນອົບອຸ່ນ ແລະ ສົ່ງຄຳອວຍພອນໄຊອັນປະເສີດ ມາຍັງ ສະຫາຍ ພ້ອມດ້ວຍບັນດາສະຫາຍ ໃນຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ, ສະມາຊິກພັກ ແລະ ປະຊາຊົນ ແຫ່ງ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ອ້າຍນ້ອງທຸກຖ້ວນໜ້າ.

ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ມີຄວາມປິຕິຍິນດີ ແລະ ພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າ ຕະຫຼອດໄລຍະ 77 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງພັກແຮງງານເກົາຫຼີ, ປະຊາຊົນ ສປປ ເກົາຫຼີ ອ້າຍນ້ອງ ສາມາດຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງຫຼາຍດ້ານ ໃນການປົກປັກຮັກສາໝາກຜົນຂອງການປະຕິວັດ ໄວ້ໄດ້ຢ່າງໝັ້ນຄົງ, ການເມືອງມີສະຖຽນລະພາບ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໄດ້ຮັບການພັດທະນາຢ່າງວ່ອງໄວ ແລະ ທັນສະໄໝ, ເສດຖະກິດນັບມື້ນັບໄດ້ຮັບການພັດທະນາ, ວຽກງານສະກັດກັ້ນ ແລະ ຕ້ານການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຍາດໄດ້ໄຊຊະນະຢ່າງບຸກທະລຸ, ຊີວິດການເປັນຢູ່ຂອງປະຊາຊົນເກົາຫຼີ ກັບຄືນເປັນປົກກະຕິ ແລະ ໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວ, ການພົວພັນຕ່າງປະເທດນັບມື້ນັບໄດ້ຮັບການເປີດກ້ວາງ, ອັນເປັນການປະກອບສ່ວນຍົກສູງຖານະບົດບາດ ຂອງ ພັກແຮງງານເກົາຫຼີ ແລະ ສປປ ເກົາຫຼີ ໃນເວທີພາກພື້ນ ແລະ ສາກົນ ຢ່າງຈະແຈ້ງ.

**4. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ສົ່ງໂທລະເລກອວຍພອນເຖິງ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ**

ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ ຜົນສຳເລັດ ຂອງ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງ ພັກກອມມູນິດຈີນ ທີ່ຫາກໍ່ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ. ເນື່ອງໃນໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງສຸດໃຈ ຕໍ່ ສະຫາຍ ຫຼີວ ຈ້ຽນຊາວ ທີ່ໄດ້ຮັບເລືອກຕັ້ງເປັນ ກຳມະການສູນກາງພັກກອມມູນິດຈີນ ໃນກອງປະຊຸມໃຫຍ່ຄັ້ງນີ້, ເຊິ່ງເປັນການສະແດງເຖິງຄວາມໄວ້ວາງໃຈ ຂອງ ຄະນະກຳມະການສູນກາງພັກກອມມູນິດຈີນ ກໍຄື ສະມາຊິກພັກ ຕໍ່ການປະກອບສ່ວນອັນໃຫຍ່ຫຼວງ ແລະ ບົດຮຽນໃນການເຄື່ອນໄຫວຕ່າງປະເທດອັນອຸດົມສົມບູນ ຂອງສະຫາຍ. ຂ້າພະເຈົ້າ ຍິນດີຮ່ວມກັບ ສະຫາຍ ສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານຕາມທິດ 4 ດີ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ກໍຄື ລະຫວ່າງ ສອງ ຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ພວກເຮົາ ໃນເງື່ອນໄຂສະພາບການໃໝ່ ໃຫ້ເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ.

ຂໍອວຍພອນໃຫ້ ສະຫາຍ, ຄະນະນຳ ແລະ ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນຈົ່ງມີສຸຂະພາບເຂັ້ມແຂງ, ມີພະລານາໄມສົມບູນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ອັນມີກຽດຂອງຕົນ.

# III. ການເຄື່ອນໄຫວວຽກງານຂອງການນຳຂັ້ນສູງ ແລະ ຄຕພ

1. **ຄະນະຜູ້ແທນຂັ້ນສູງພັກ ປປ ລາວ ສຳເລັດການຢ້ຽມຢາມ ຍີ່ປຸ່ນ**



ຄະນະຜູ້ແທນຂັ້ນສູງພັກ ປປ ລາວ ນຳໂດຍ ທ່ານ ນາງ ສີໃສ ລືເດດມູນສອນ, ກຳມະການກົມການເມືອງ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ສຳເລັດການຢ້ຽມຢາມ ຍີ່ປຸ່ນ ແຕ່ວັນທີ 28 ກັນຍາ ຫາ 02 ຕຸລາ 2022. ໃນໄລຍະຢ້ຽມຢາມ, ຄະນະ ໄດ້ພົບປະກັບ ທ່ານ ອີໂຕ ຊິນທາໂລ, ຫົວໜ້າສຳນັກງານສາກົນຂອງ ພັກເສລີປະຊາທິປະໄຕ; ທ່ານ ທາເກອິ ຊຸນຊຸເກ, ຮອງລັດຖະມົນຕີກະຊວງການຕ່າງປະເທດຍີ່ປຸ່ນ; ທ່ານ ຊືຈິຍະ ຊິນາໂກະ, ປະທານຄະນະມິດຕະພາບ ລັດຖະສະພາ ຍີ່ປຸ່ນ-ລາວ; ເຈົ້າຄອງນະຄອນກຽວໂຕ, ສະມາຄົມມິດຕະພາບຄັນໄຊ-ລາວ ແລະ ຮັບການເຂົ້າຢ້ຽມຂໍ່ານັບຂອງອົງການໄຈກາ. ຄະນະ ຍັງໄດ້ເຂົ້າພົບປກັບ ທ່ານ ຊີອີ ຄາຊືໂອະ, ປະທານຄະນະບໍລິຫານງານສູນກາງພັກກອມມູນິດຍີ່ປຸ່ນ.

ໃນການພົບປະດັ່ງກ່າວ, ສອງຝ່າຍ ໄດ້ເປັນເອກະພາບຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ພັກເສລີປະຊາທິປະໄຕ ກໍ່ຄື ສາຍພົວພັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສອງປະເທດລາວ-ຍີ່ປຸ່ນ ໃນໄລຍະຜ່ານມາ ກໍຄື ປັດຈຸບັນ ເຖິງວ່າສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ຈະສົ່ງຜົນກະທົບໃຫ້ແກ່ການໄປມາຫາສູ່ກັນ ລະຫວ່າງ ສອງຝ່າຍ ກໍ່ຕາມ ແຕ່ສາຍພົວພັນດັ່ງກ່າວຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍ ແລະ ຮັດແໜ້ນ, ສອງຝ່າຍ ຍິນດີສືບຕໍ່ຊຸກຍູ້ແລກປ່ຽນການພົບປະ ແລະ ຢ້ຽມຢາມຂອງການນຳຂັ້ນສູງຂອງສອງປະເທດ ລວມທັງການໄປມາຫາສູ່ກັນ ລະຫວ່າງ ປະຊາຊົນສອງຊາດລາວ-ຍີ່ປຸ່ນ ໃຫ້ເປັນປົກກະຕິ. ຝ່າຍຍີ່ປຸ່ນ ຍິນດີສືບຕໍ່ຊຸກຍູ້ການລົງທຶນຂອງຍີ່ປຸ່ນ ຢູ່ ສປປ ລາວ ໃຫ້ຫຼາຍຂຶ້ນ, ສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອ ສປປ ລາວ ໃນການພັດທະນາພື້ນຖານໂຄງລ່າງ, ສາທາລະນະສຸກ, ການສຶກສາ, ວັດທະນະທຳ ແລະ ອື່ນໆ; ທ່ານ ນາງ ສີໃສ ລືເດດມູນສອນ ໄດ້ຕາງໜ້າພັກ, ລັດຖະບານ ແລະ ປະຊາຊົນລາວ ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ການຮ່ວມມື ແລະ ຊ່ວຍເຫຼືອ ສປປ ລາວ ຂອງລັດຖະບານ ກໍຄື ປະຊາຊົນຍີ່ປຸ່ນ ໃນໄລຍະຜ່ານມາ.

### 2. ຄະນະພົວພັນຕ່າງປະເທດສູນກາງພັກ ຈັດປາຖະກະຖາ ເຊື່ອມຊຶມເອກະສານສຳຄັນ ຂອງພັກ-ລັດ



ວັນທີ 10 ຕຸລາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມມູນເຊື້ອວັນປະກາດເອກະລາດ ຄົບຮອບ 77 ປີ; ວັນການທູດລາວ ຄົບຮອບ 77 ປີ ແລະ ວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ຂອງ ສປປລາວ, ໂດຍໃຫ້ກຽດເຜີຍແຜ່ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍໃນຄະນະບໍລິຫານງານພັກ, ສະມາຊິກພັກ, ພະນັກງານ ທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ.

ສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ທວນຄືນມູນເຊື້ອອັນພິລະອາດຫານໃນຂະບວນການຕໍ່ສູ້ຂອງ ປະຊາຊົນລາວ ຕ້ານການຮຸກຮານຂອງຈັກກະພັດຕ່າງດ້າວ ພາຍໃຕ້ການນຳພາຂອງວິລະຊົນ, ວິລະບູລຸດຜູ້ເກັ່ງກ້າ ໃນໄລຍະທີ່ບໍ່ທັນມີພັກນຳພາ ແລະ ການຕໍ່ສູ້ກູ້ຊາດຕ້ານພວກລ່າເມືອງຂຶ້ນ ພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນ ເລີ່ມແຕ່ປີ 1930 ແລະ ພາຍຫຼັງທີ່ໄດ້ສ້າງຕັ້ງອົງຄະນະພັກແຄວ້ນລາວ ເຮັດໃຫ້ການຕໍ່ສູ້ຂອງປະຊາຊົນລາວຍາດໄດ້ໄຊຊະນະຢ່າງເນືອງນິດລຽນຕິດຈົນສາມາດ ປະກາດເອກະລາດຕໍ່ຊາວໂລກໃນວັນທີ 12 ຕຸລາ 1945. ວັນດັ່ງກ່າວ ຍັງເປັນວັນສ້າງຕັ້ງການທູດລາວ ທີ່ເປັນຈຸດເລີ່ມຕົ້ນ ຂອງການກຳນົດແນວທາງນະໂຍບາຍການຕ່າງປະເທດທີ່ຖືກຕ້ອງ ແລະ ປະດິດສ້າງຂອງພັກເຮົາ, ປະກອບສ່ວນສຳຄັນເຂົ້າໃນພາລະກິດການຕໍ່ສູ້ປົດປ່ອຍຊາດ, ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດສູ່ຈຸດໝາຍສັງຄົມນິຍົມ ຕະຫຼອດໄລຍະ 77 ປີຜ່ານມາ. ໃນປັດຈຸບັນພັກເຮົາໄດ້ມີການເປີດກວ້າງການພົວພັນກັບບັນດາພັກການເມືອງ ຈຳນວນ 140 ພັກ ແລະ ມີສາຍພົວພັນການທູດກັບ 148 ປະເທດ; ໄດ້ທວນຄືນປະຫວັດຄວາມເປັນມາຂອງ ວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ຂອງ ສປປ ລາວ ທີ່ຄາດວ່າ ປີ 2026 ໃຫ້ສາມາດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ.

### 3. ຄຕພ ຈັດກອງປະຊຸມສ້າງແຜນກຳນົດ ພະນັກງານນຳພາ-ຄຸ້ມຄອງ ຂັ້ນສູນກາງຄຸ້ມຄອງ

ໃນລະຫວ່າງວັນທີ 24-25/10/2022, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດກອງປະຊຸມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງ ໃຫ້ກຽດເປັນປະທານໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍມີສະຫາຍຜູ້ຕາງໜ້າຈາກ ຄະນະຈັດຕັ້ງສູນກາງພັກ, ບັນດາສະຫາຍໃນຄະນະພັກ-ຄະນະນຳ, ອະດີດພະນັກງານການນຳ ຄຕພ, ຄະນະກົມ, ຄະນະໜ່ວຍພັກ ເຂົ້າຮ່ວມຢ່າງພ້ອມພຽງ.




ໃນພິທີ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ມີຄຳເຫັນຊີ້ນຳກອງປະຊຸມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງ, ໂດຍໄດ້ເນັ້ນໜັກເຖິງຄວາມໝາຍ ແລະ ຄວາມສຳຄັນຂອງການສ້າງແຜນກຳນົດພະນັກງານນຳພາ ເຊິ່ງເປັນວຽກງານພື້ນຖານທີ່ສຳຄັນໃນການຫັນຍຸດທະສາດກ່ຽວກັບວຽກງານພະນັກງານ ເປັນອັນລະອຽດ, ທັງສອດຄ່ອງກັບລະບຽບການຂອງການສ້າງແຜນກໍ່ສ້າງ-ບຳລຸງ, ຄາດຄະເນການສັບຊ້ອນ ແລະ ຈັດວາງພະນັກງານ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ແຕ່ປີ 2022-2025. ກອງປະຊຸມໄດ້ດຳເນີນໄປຕາມຂັ້ນຕອນ, ດ້ວຍຄວາມຮັບຜິດຊອບສູງ ແລະ ບັນລຸຕາມລະດັບຄາດ ໝາຍທີ່ວາງໄວ້.

**4. ຄະນະພົວພັນຕ່າງປະເທດສູນກາງພັກ ກອມມູນິດຫວຽດນາມ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ**



ເພື່ອເປັນການຊຸກຍູ້ ການຈັດຕັ້ງປະຕິບັດ ບັນດາຂໍ້ຕົກລົງຂອງ ການນຳຂັ້ນສູງຂອງສອງພັກ, ສອງລັດ ລາວ-ຫວຽດນາມ, ຄະນະຜູ້ແທນ ຄະນະພົວພັນຕ່າງປະເທດສູນກາງພັກ ກອມມູນິດຫວຽດນາມ ນຳໂດຍ ສະຫາຍ ນາງ ຫງວຽນຖິຮວ່າງເວີນ, ຮອງຫົວໜ້າຜູ້ປະຈຳການ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ພ້ອມ

ດ້ວຍຄະນະ ໄດ້ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ແຕ່ວັນທີ 11-14 ຕຸລາ 2022 ເພື່ອຮ່ວມກັບ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ, ບັນດາກະຊວງ, ຂະແໜງການ ທີ່ກ່ຽວຂ້ອງຂອງລາວ ຕີລາຄາຄືນການຈັດຕັ້ງປະຕິບັດ ບັນດາໂຄງການ ຊ່ວຍເຫຼືອ ແລະ ຮ່ວມມືລົງທຶນ ຂອງສອງຝ່າຍໃນໄລຍະຜ່ານມາ.

ໃນໄລຍະດັ່ງກ່າວ, ຄະນະຜູ້ແທນ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ, ເຊິ່ງ ສະຫາຍ ນາງ ຫງວຽນຖິຮ່ວາງເວີນ ໄດ້ກ່າວສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ເຕັມໄປດ້ວຍໄມຕີຈິດມິດຕະພາບ ອັນສະໜິດສະໜົມຖານສະຫາຍອ້າຍນ້ອງ ທີ່ຝ່າຍລາວມີໃຫ້ແກ່ຄະນະໃນຄັ້ງນີ້, ພ້ອມທັງໄດ້ລາຍງານການຢ້ຽມຢາມໃນຄັ້ງນີ້ ໃຫ້ສະຫາຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຮັບຊາບ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕີລາຄາສູງ ແລະ ຊົມເຊີຍ ຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຢູ່ລາວ ໃນຄັ້ງນີ້, ເຊິ່ງເປັນໂອກາດດີທີ່ສອງຝ່າຍ ຈະໄດ້ຮ່ວມກັນຕີລາຄາຄືນກ່ຽວກັບການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ຂອງສອງການນໍາຂັ້ນສູງຂອງສອງພັກ, ສອງລັດ ເວົ້າລວມ, ເວົ້າສະເພາະລະຫວ່າງ ສອງຄະນະພົວພັນຕ່າວປະເທດສູນກາງພັກ ລາວ-ຫວຽດນາມ ແລະ ໄດ້ສະແດງຄວາມປິຕິຊົມຊື່ນຕໍ່ຜົນສໍາເລັດການພົບປະຂອງສອງຝ່າຍ ແລະ ໄດ້ແຈ້ງໃຫ້ຊາບກ່ຽວກັບສະພາບການ ພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕົ້ນປີ 2022 ຕິດພັນກັບຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ .ໃນໄລຍະການຢ້ຽມຢາມ ແລະ ເຮັດວຽກຢູ່ ລາວ, ຄະນະ ຍັງໄດ້ລົງກວດກາ ບາງໂຄງການຮ່ວມມື ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງ ໄຊສົມບູນ.

**5. ຄະນະຜູ້ແທນຄະນະສັນຕິພາບ ແລະ ສາມັກຄີຂອງລາວ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ ຫວຽດນາມ**



ຄະນະຜູ້ແທນຄະນະສັນຕິພາບ ແລະ ສາມັກຄີຂອງລາວ ນໍາໂດຍ ສະຫາຍ ສົມມາດ ພົລເສນາ, ກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ໄດ້ເດີນທາງຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ ແຕ່ວັນທີ 4-9 ຕຸລາ 2022. ຄະນະຜູ້ແທນຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ເຈີນ ແທງ ເມິ້ນ, ກໍາມະການກົມການເມືອງສູນກາງພັກ, ຮອງປະທານຜູ້ປະຈໍາການສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ຫວຽດນາມ-ລາວ ແລະ ພົບກັບ ສະຫາຍ ອວງ ຈູລິວ, ອະດີດກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ຫວຽດນາມ ແລະ ສະຫາຍ ຫງວຽນເຟືອງງາ, ປະທານສະຫະພັນບັນດາອົງການຈັດຕັ້ງມິດຕະພາບ ຫວຽດນາມ, ສອງຝ່າຍ ໄດ້ຕີລາຄາສູງການພົວພັນຮ່ວມມືລະຫວ່າງສອງປະເທດ, ການນໍາຂັ້ນສູງຂອງ ພັກ, ລັດ, ທຸກຂົງເຂດ, ຂະແໜງການຂອງ ສອງປະເທດ ລາວ -

ຫວຽດນາມ ໄດ້ແລກປ່ຽນ ການຢ້ຽມຢາມໄປມາຫາສູ່ກັນ, ແລກປ່ຽນຂໍ້ມູນຂ່າວສານ, ສະພາບການພາກພື້ນ ແລະ ສາກົນ, ຮ່ວມມືກັນຢ່າງມີຜົນສຳເລັດ ສະແດງໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນ ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນ ສອງຊາດ ລາວ - ຫວຽດນາມ ໄດ້ຮັບການເສີມຂະຫຍາຍທັງທາງກວ້າງ ແລະ ທາງເລິກ, ສວຍສົດງົດງາມ ແລະ ເກີດດອກອອກ ຜົນນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ ແລະ ຫວຽດນາມ.

**6. ສະມາຄົມມິດຕະພາບ ລາວ-ສປປ ເກົາຫຼີ ຮ່ວມກັບສະຖານທູດ ສປປ ເກົາຫຼີ ປະຈຳ ສປປ ລາວ ຈັດປາຖະກະຖາ ໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 77 ປີ**




ວັນທີ 07 ຕຸລາ 2022 ທີ່ສຳນັກງານຫ້ອງວ່າການນະຄອນຫຼວງວຽງຈັນ, ສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ ຮ່ວມກັບສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປາຖະກະຖາເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 77 ປີ (10/10/1945 – 10/10/2022) ໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ປອ. ອາດສະພັງທອງ ສີພັນດອນ, ກຳມະການສູນກາງພັກ, ເຈົ້າຄອງນະຄອນຫຼວງວຽງຈັນ, ປະທານສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ; ສະຫາຍ ລີ ຢອງໂຊນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ; ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ. ສະຫາຍ ລີ ຢອງໂຊນ ໄດ້ຂຶ້ນກ່າວປາຖະກະຖາເຖິງ ຜົນງານມູນເຊື້ອຂອງພັກແຮງງານເກົາຫຼີ ພາຍໃຕ້ການຊີ້ນຳໆພາຂອງ ສະຫາຍ ກິມ ອິນ ຊຸງ ແລະ ສະຫາຍ ກິມ ເຈີງ ອິນ, ຜູ້ນຳທີ່ຍິ່ງໃຫຍ່, ປະທານປະເທດຕະຫຼອດການແຫ່ງ  ສປປ ເກົາຫຼີ, ຜູ້ນຳພາແນວຄິດຈູດເຊ່ໃນພາລະກິດປະຕິວັດປົດປ່ອຍຊາດ ກໍຄືການນຳພາ ຂອງ ສະຫາຍ ກິມ ເຈີງ ອຸນ, ຜູ້ນຳສູງສຸດຄົນປັດຈຸບັນໄປຕາມ "ລັດທິກິມ ອິນ ຊຸງ - ກິມ ເຈີງ ອິນ"  ທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນພາລະກິດການພັດທະນາການປະຕິວັດໃນໄລຍະໃໝ່ ອັນໄດ້ເຮັດໃຫ້ ສປປ ເກົາຫຼີ ມີການພັດທະນາຮອບດ້ານ, ການເມືອງມີສະຖຽນລະພາບໝັກແໜ້ນ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ ສປປ ເກົາຫຼີໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ. ໃນໂອກາດດັ່ງກ່າວໄດ້ມີການວາງສະແດງຮູບພາບ, ສາຍວີດີໂອ, ສະແດງສິລະປະຂອງສປປ ເກົາຫຼີ.

### 7. ສະມາຄົມມິດຕະພາບ ລາວ-ລັດເຊຍ ຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ລັດເຊຍ ຄົບຮອບ 62 ປີ

ວັນທີ 7 ຕຸລາ 2022, ສະມາຄົມມິດຕະພາບ ລາວ-ລັດເຊຍ ໄດ້ຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ລັດເຊຍ ຄົບຮອບ 62 ປີ (07/10/1960-07/10/2022), ໃຫ້ກຽດເຂົ້າຮ່ວມຂອງ ທ່ານ ສຈ.ປອ.ບໍ່ແສງຄໍາ ວົງດາລາ, ປະທານສະມາຄົມມິດຕະພາບ ລາວ-ລັດເຊຍ, ທ່ານ ວາດິເມຍ ກາລີນິນ ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສ.ລັດເຊຍ ປະຈໍາ ສປປ ລາວ; ມີ ຄະນະນໍາ ຄະນະພົວພັນຕ່າງປະເທດສູນກາງພັກ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ, ຫົວໜ້າຫ້ອງການຜູ້ຕາງໜ້າສະມາຄົມມິດຕະພາບ ລັດເຊຍ-ລາວ ປະຈໍາ ສປປ ລາວ ແລະ ຄະນະບໍລິຫານງານສະມາຄົມມິດຕະພາບ ລາວ-ລັດເຊຍ ເຂົ້າຮ່ວມ 60 ທ່ານ.




ໃນພິທີດັ່ງກ່າວ, ທ່ານ ສຈ.ປອ. ບໍ່ແສງຄໍາ ວົງດາລາ, ປະທານສະມາຄົມມິດຕະພາບ ລາວ-ລັດເຊຍ ໄດ້ມີຄໍາເຫັນວ່າ ລາວ ແລະ ລັດເຊຍ ສ້າງຕັ້ງສາຍພົວພັນການທູດນໍາກັນ ໃນວັນທີ 07 ຕຸລາ 1960, ນັບແຕ່ນັ້ນເປັນຕົ້ນມາ ສອງປະເທດ ໄດ້ມີການພັດທະນາ, ເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງເປັນແຕ່ລະໄລຍະ, ເຖິງແມ່ນວ່າ ລາວ ແລະ ລັດເຊຍ ຈະມີທີ່ຕັ້ງພູມສັນຖານຢູ່ຫ່າງໄກກັນຄົນລະທະວີບ ແຕ່ສອງປະເທດກໍ່ພະຍາຍາມພັດທະນາ ແລະ ເສີມຂະຫຍາຍສາຍພົວພັນໃຫ້ນັບມື້ແໜ້ນແຟ້ນ, ມີການໄປມາຫາສູ່ກັນ, ມີຄວາມໄວ້ເນື້ອເຊື່ອໃຈ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຕັ້ງແຕ່ໄລຍະຕໍ່ສູ້ປົດປ່ອຍປະເທດຊາດ ກໍຄືໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຮັດໃຫ້ປະຊາຊົນສອງຊາດ ມີຄວາມເຂົ້າໃຈກັນ, ເຫັນໃຈ, ມີການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນຕະຫຼອດມາ ໃນເວທີພາກພື້ນ ແລະ ສາກົນ. ສໍາລັບ ສະມາຄົມມິດຕະພາບ ລາວ-ລັດເຊຍ ໃນຖານະເຮັດໜ້າທີ່ເຄື່ອນໄຫວວຽກງານການທູດປະຊາຊົນ, ຍາມໃດກໍ່ສະໜັບສະໜູນ ແລະ ເຮັດໜ້າທີ່ເປັນຂົວຕໍ່ການພົວພັນຮ່ວມມືກັບຂະແໜງການຕ່າງໆ ຂອງ ສອງປະເທດ ໃຫ້ມີການພົວພັນຮ່ວມມື, ຊຸກຍູ້ໃຫ້ປະຊາຊົນສອງຊາດ ລາວ ແລະ ລັດເຊຍ ໄດ້ມີການພົວພັນຮ່ວມມື, ໄປມາຫາສູ່ກັນຫຼາຍຂຶ້ນ, ເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ທີ່ມີມາແຕ່ຍາວນານ ໃຫ້ນັບມື້ເຕີບໃຫຍ່ເຂັ້ມແຂງ ແລະ ເກີດດອກອອກຜົນ,ເຊິ່ງ ໄລຍະຜ່ານມາ, ສະມາຄົມມິດຕະພາບ ລາວ-ລັດເຊຍ ຮ່ວມກັບ ສະມາຄົມມິດຕະພາບ ລັດເຊຍ-ລາວ ໄດ້ຈັດກິດຈະກໍາເນື່ອງໃນໂອກາດວັນສໍາຄັນ ຂອງ ສອງປະເທດ ຄື: ວັນຊາດ, ວັນສ້າງຕັ້ງສາຍພົວພັນການທູດ, ວັນມະຫາປະຕິວັດສັງຄົມນິຍົມເດືອນຕຸລາ, ວັນໄຊຊະນະເໜືອຟາຊິດ ແລະ ອື່ນໆ.

**8. ແຂ່ງຂັນກິລາມິດຕະພາບ ຊົມເຊີຍວັນການທູດລາວ ຄົບຮອບ 77 ປີ**



ວັນທີ 1 ແລະ ທີ 6 ຕຸລາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ກະຊວງການຕ່າງປະເທດ ໄດ້ຈັດແຂ່ງຂັນກິລາ ດອກປີ້ງໄກ່ ແລະ ກິລາບານເຕະ ເພື່ອຊົມເຊີຍ ວັນການທູດລາວ ຄົບຮອບ 77 ປີ (12/10/1945-12/10/2022) ທັງເປັນການຮັດແໜ້ນຄວາມສາມັກຄີ ລະຫວ່າງ ຂະແໜງການຕ່າງປະເທດສາຍພັກ ແລະ ຂະແໜງການຕ່າງປະເທດສາຍລັດ ໃຫ້ແໜ້ນແຟ້ນຂຶ້ນຕື່ມ ເພື່ອຮັບປະກັນການປະສານງານ ແລະ ແລກປ່ຽນຂ່າວສານ ໄດ້ວ່ອງໄວ ແລະ ທັນການກວ່າເກົ່າ, ໃຫ້ກຽດເຂົ້າຮ່ວມ ໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຫາຍ ສະເຫຼີມໄຊ ກົມມະສິດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ; ມີບັນດາຄະນະກົມ ຕະຫຼອດຮອດພະນັກງານຂອງສອງພາກສ່ວນເຂົ້າຮ່ວມຫຼາຍກວ່າ 300 ສະຫາຍ.